# ຄູ່ມືແນະນຳການນຳໃຊ້ໂປຣແກຣມສາງ

## ➢ ໜ້າທີ່ຂອງໂປຣແກຣມ:

1) ບໍລິຫານລະບົບສິນຄ້າ: ຈັດໝວດສິນຄ້າ, ຍ່ອຍລາຍການສິນຄ້າ, ລາຍການຈຳນວນສິນຄ້າ ແລະ ລະບົບລາຍງານກ່ຽວກັບການເຄື່ອນໄຫວສິນຄ້າ (ຮັບເຂົ້າ - ຈ່າຍອອກ - ຍັງເຫຼືອ).
2) ຕິດຕາມການຮັບສິນຄ້າຈາກການຈັດຊື້, ມີລະບົບຕິດຕາມການຕິດໜີ້ - ຊຳລະໜີ້ຜູ້ສະໜອງ ແລະ ລະບົບການລາຍງານ.
3) ມີລະບົບການຈ່າຍສິນຄ້າເພື່ອຊົມໃຊ້ພາຍໃນ ຫຼື ດ້ວຍເຫດຜົນອື່ນເປັນຕົ້ນການຈ່າຍດັດແກ້ຈຳນວນ, ສິນຄ້າເສຍຫາຍ ຫຼື ສິນຄ້າເຊື່ອມຄຸນ...
4) ມີລະບົບການຂາຍທີ່ສາມາດແຍກພະນັກງານຂາຍ, ຈຳແນກລູກຄ້າໄດ້, ສາມາດຕັ້ງໄດ້ 3 ລາຄາ, ການໃຫ້ສ່ວນຫຼຸດ, ລາຍການແຖມ ແລະ ອອກບິນໄດ້ 3 ແບບຄື: ບິນນ້ອຍ, A5, A4 ແລະ ລະບົບການລາຍງານ
5) ມີລະບົບການຕິດຕາມລູກຄ້າຕິດໜີ້ - ຊຳລະໜີ້ ພ້ອມດ້ວຍລະບົບການລາຍງານ.
6) ມີລະບົບການຮັບສິນຄ້າຄືນຈາກລູກຄ້າ ແລະ ການສົ່ງສິນຄ້າຄືນໃຫ້ແກ່ຜູ້ສະໜອງ ພ້ອມດ້ວຍລະບົບການງາຍງານ.
7) ລະບົບແມ່ນນຳໃຊ້ຫົວໜ່ວຍເງິນກີບເປັນຫຼັກ ແຕ່ໃນການເຄື່ອນໄຫວຊື້ - ຂາຍແມ່ນສາມາດຊຳລະໄດ້ຫຼາຍສຳກຸນເງິນ (ກີບ, ບາດ, ໂດລາ).
8) ລະບົບການລາຍງານສາມາດກຳນົດເບິ່ງໄດ້ເປັນວັນ, ເປັນເດືອນ, ເປັນງວດ, ທົກເດືອນຕົ້ນປີ ຫຼື ທ້າຍປີ ແລະ ເປັນປີ.
9) ບັນດາໃບລາຍງານສາມາດສຳຮອງອອກໄປເປັນ File ອື່ນໄດ້ເປັນຕົ້ນແມ່ນ: DPF, Word, Excel...
10) ມີລະບົບເປີດບັນຊີເບື້ອງຕົ້ນ ແລະ ປິດບັນຊີໃນທ້າຍເດືອນເພື່ອສະຫຼຸບ ແລະ ຍົກຍອດເດືອນຕໍ່ໄປ.
11) ມີລະບົບປ້ອງກັນການນຳໃຊ້ໂປຣແກຣມເຊິ່ງສາມາດສ້າງລະຫັດຂອງຜູ້ໃຊ້ ແລະ ກຳນົດສິດການເຂົ້າໃຊ້ລະບົບຕາມໜ້າທີ່ວຽກງານ.
12) ມີລະບົບການສຳຮອງຂໍ້ມູນເພື່ອປ້ອງກັນການສູນເສຍຂໍ້ມູນການເຄື່ອນໄຫວ
13) ສາມາດໃຊ້ກັບ Printer ຊະນິດຕ່າງໆ ແລະ ເຄື່ອງຍິງເລກບາໂຄດໄດ້.

## ❖ ວິທີການນຳໃຊ້ໂປຣແກຣມສາງ - ຂາຍສິນຄ້າ.

a) ກ່ອນທີ່ຈະສາມາດເຄື່ອນໄຫວການຊື້ - ຂາຍ ໃນລະບົບກໍ່ຕ້ອງມີໝວດປະເພດສິນຄ້າ, ລະຫັດສິນຄ້າ, ຊື່ສິນຄ້າ, ຕັ້ງລາຄາສິນຄ້າ, ປ້ອນລາຍການຈຳນວນສິນຄ້າ ແລະ ຕົ້ນທຶນເຂົ້າໃນລະບົບຄອມພິວເຕີກ່ອນ.

APIS APSTOCK

b) ເປີດຍອດຍົກສິນຄ້າທີ່ໄດ້ກວດນັບເຂົ້າໃນລະບົບ.

c) ຕັ້ງຂໍ້ມູນສຳໜັກງານເພື່ອໄປສະແດງຢູ່ຫົວຂໍ້ໃບບິນ ແລະ ອັດຕາແລກປ່ຽນ.

d) ຈາກວິທີຂ້າງເທິງກໍ່ສາມາດເຄື່ອນໄຫວລະບົບໄດ້ເປັນຕົ້ນການການຊື້ສິນຄ້າເຂົ້າມາໃໝ່, ການຂາຍສິນຄ້າ, ການເບິ່ງລາຍງານ ແລະ ອື່ນໆ.

e) ຫຼັງຈາກເຄື່ອນໄຫວເປັນປົກກະຕິໃນເວລາຮອດທ້າຍເດືອນກໍ່ສາມາດປິດບັນຊີປະຈຳເດືອນແລ້ວລະບົບຈະຍົກຍອດໄປເຄື່ອນໄຫວໃນເດືອນຕໍ່ໄປໃຫ້ເອງອັດຕະໂນມັດ.

# ຂັ້ນຕອນການນຳໃຊ້ໂປຣແກຣມ

## 1. ການ LOGIN ເຂົ້າໃນລະບົບ, ການສ້າງ ແລະ ກຳນົດສິດການເຂົ້າໃຊ້ງານ:

ການ LOGIN ເຂົ້າໃຊ້ງານລະບົບໃນແຕ່ລະຄັ້ງຜູ້ໃຊ້ຈະຕ້ອງມີລະຫັດການໃຊ້ງານຂອງຕົນເຊິ່ງລະບົບຄວາມປອດໄພແມ່ນຈະສາມາດສ້າງ ແລະ ກຳນົດໜ້າທີ່ການເຂົ້າໃຊ້ງານຂອງແຕ່ລະຜູ້ໃຊ້ງານໄດ້.




ຄວາມໝາຍຂອງປຸ່ມເຄື່ອງມື:




APSTOCK

ກໍ່ຈະສະແດງໜ້າຕ່າງຂອງໂປຣແກຣມຂຶ້ນມາດັ່ງຮູບລຸ່ມນີ້:




ສໍາຫຼັບການສ້າງ ແລະ ກໍານົດໜ້າທີ່ຂອງຜູ້ໃຊ້ງານແມ່ນສາມາດກໍານົດໄດ້ວ່າເມນູການໃຊ້ງານ ຫຼື ລາຍງານໃດທີ່ຂະອານຸຍາດໃຫ້ຜູ້ໃຊ້ທົ່ວໄປສາມາດໃຊ້ງານໄດ້ ເຊິ່ງຂັ້ນຕອນການກໍານົດຕ້ອງແມ່ນ Admin ເປັນຜູ້ກໍານົດເຊິ່ງມີວິທີການດັ່ງນີ້:






ໃນຂັ້ນຕອນທີ່ 8 ເປັນການກຳນົດວ່າເມນູໃດທີ່ອານຸຍາດໃຫ້ຜູ້ໃຊ້ສາມາດນຳໃຊ້ ຖ້າຫາກບໍ່ຕ້ອງການໃຫ້ເຂົ້າໃຊ້ກໍ່ສາມາດຕິກເຄື່ອງໝາຍຖືກອອກໄດ້.

## 2. ການກຳນົດຂໍ້ມູນສຳໜັກງານ:



## 3. ການກຳນົດອັດຕາແລກປ່ຽນ:

ຜູ້ໃຊ້ສາມາດກຳນົດອັດຕາແລກປ່ຽນໄດ້ຕາມຄວາມຕ້ອງການ ແລະ ລະບົບແມ່ນຈະດຶງຄ່າອັດຕາແລກປ່ຽນຄັ້ງຫຼ້າສຸດມາເຄື່ອນໄຫວ ຫຼື ຕາມວັນທີ ທີ່ໄດ້ຕັ້ງຄ່າອັດຕາແລກປ່ຽນໄວ້.




## 4. ການເພີ່ມຂໍ້ມູນພະນັກງານຂາຍ:

ໃນການບັນທຶກລາຍຊື່ພະນັກງານຂາຍໄວ້ ແມ່ນເພື່ອສະດວກໃນເວລາອອກບິນຂາຍຖ້າຫາກຜູ້ໃຊ້ລະບົບຕ້ອງການທີ່ຈະຕິດຕາມພະນັກງານຂາຍ ກໍ່ສາມາດເລືອກລາຍຊື່ພະນັກງານໃນເວລາຂາຍສິນຄ້າໄດ້ ແລະ ເບິ່ງລາຍງານການຂາຍຕາມພະນັກງານໄດ້.



## 5. ການເພີ່ມຂໍ້ມູນລາຍຊື່ຜູ້ສະໜອງ:

ເປັນການເພີ່ມບັນຊີລາຍຊື່ຮ້ານຄ້າ ຫຼື ຜູ້ສະໜອງສິນຄ້າທີ່ເຮົາໄດ້ສັ່ງຊື້ສິນຄ້ານຳ. ຖ້າຫາກມີການແຍກລາຍຊື່ຜູ້ສະໜອງວ່າໃນເວລາລົງບັນຊີຮັບສິນຄ້າຈາກການຈັດຊື້ແມ່ນຊື້ນຳຜູ້ສະໜອງໃດ ຜູ້ໃຊ້ກໍ່ຈະສາມາດເບິ່ງລາຍງານການຈັດຊື້ໄດ້ໂດຍລະອຽດ.




## 6. ການເພີ່ມຂໍ້ມູນລາຍຊື່ລູກຄ້າ

ການເພີ່ມບັນຊີລາຍຊື່ລູກຄ້າ ແມ່ນຈະສ້າງຄວາມສະດວກໃຫ້ແກ້ຜູ້ໃຊ້ຖ້າຫາກເວລາອອກບິນຂາຍໄດ້ມີການແຍກລາຍຊື່ລູກຄ້າ ໃນເວລາເບິ່ງລາຍງານການຂາຍ ຜູ້ໃຊ້ກໍ່ສາມາດກອດເບິ່ງລາຍງານການຂາຍຕາມລູກຄ້າໄດ້ ໂດຍສະເພາະຍາກຕິດຕາມລູກຄ້າໃດໜຶ່ງໂດຍສະເພາະ.






## 7. ການເພີ່ມຫົວຂໍ້ການຈ່າຍສິນຄ້າອອກສາງ ຫຼື ຊົມໃຊ້ພາຍໃນ



## 8. ການສ້າງໝວດ, ການຍ່ອຍລາຍການສິນຄ້າ ແລະ ການປ້ອນລາຍການຈຳນວນສິນຄ້າຈາກການກວດນັບ.

❖ **ການສ້າງໝວດ:**




❖ **ການຍ່ອຍລາຍການສິນຄ້າ:**

ຫຼັງຈາກທີ່ໄດ້ສ້າງໝວດສິນຄ້າແລ້ວ ຜູ້ໃຊ້ກໍ່ຕ້ອງໄດ້ມາຍ່ອຍລາຍການວ່າພາຍໃນໝວດສິນຄ້ານັ້ນປະກອບມີລາຍການສິນຄ້າໃດແດ່ ເຊິ່ງມີວິທີການດັ່ງລຸ່ມນີ້:






## ❖ ການປ້ອນລາຍການຈຳນວນ:

ເປັນການປ້ອນຈຳນວນສິນຄ້າທີ່ໄດ້ຈາກການກວດນັບຕົວຈິງທີ່ມີໃນປະຈຸບັນ ເຂົ້າໃນລະບົບໂປຣແກຣມເພື່ອ ເປີດບັນຊີເຄື່ອນໄຫວ (ເປີດຍອດຍົກ) ເຊິ່ງຈະແນະນຳໃນຂັ້ນຕອນຕໍ່ໄປ.



## 9. ການເປີດລະບົບຍອດຍົກ

ຫຼັງຈາກທີ່ໄດ້ເຂົ້າລາຍການຈຳນວນທີ່ໄດ້ກວດນັບສິນຄ້າທີ່ມີໃນປັດຈຸບັນແລ້ວ ຜູ້ໃຊ້ຕ້ອງໄດ້ເປີດຍອດຍົກຄັ້ງທຳອິດເພື່ອໃຫ້ລະບົບເຄື່ອນໄຫວ ແລະ ຕ້ອງໄດ້ປິດບັນຊີປະຈຳເດືອນ ເພື່ອໃຫ້ລະບົບຄຳນວນສະຫຼຸບການເຄື່ອນໄຫວ ແລະ ລະບົບຈະຍົກຍອດໃນເດືອນຕໍ່ໄປໂດຍອັດຕະໂນມັດ.






# ຍອດຍົກປະຈຳເດືອນ

05/2015

**ບໍລິສັດ APIS ຈຳກັດ**

Tel 020 22333383
Fax 021 617010

| ລ/ດ NO | ລະຫັດ Code | ລາຍການສິນຄ້າ(ລາວ) Discription(Lao) | ລາຍການສິນຄ້າ(ອັງກິດ) Discription(Eng) | ຫົວໜ່ວຍ Unit | ຕົ້ນທຶນ Cost | ຈຳນວນ Quantity | ເປັນເງິນ Amount |
|---|---|---|---|---|---|---|---|
| 1 | 001 | ໝວດ ເຄື່ອງດື່ມ | | | 10000 | 198 | 990,000 |
| 1 | 001.0001 | ເປບຊີ | | ຕຸກ | 5000 | 98 | 490,000 |
| 2 | 001.0007 | ເບຍ | | ແກ້ວ | 5000 | 100 | 500,000 |
| 2 | 002 | ເຂົ້າໜົມ | | | 10000 | 99 | 990,000 |
| 3 | 002.0001 | ເຂົ້າໜົມ ອົມ | | ຖົງ | 10000 | 99 | 990,000 |
| | | | | Total = | 20000 | 297 | 1,980,000 |

ຜູ້ກວດກາ
Inspector

ຜູ້ລາຍງານ
Reporter

## 10. ການຮັບສິນຄ້າຈາກການຈັດຊື້ ແລະ ການລາຍງານ:

ໃນການຮັບສິນຄ້າຈາກການຈັດຊື້ ຜູ້ໃຊ້ສາມາດຮັບໄດ້ສາມສະກຸນເງິນຕາມອັດຕາແລກປ່ຽນທີ່ໄດ້ຕັ້ງໄວ້ໂດຍການເລືອກສະກຸນເງິນກ່ອນ ແລະ ໃນການເລືອກລາຍການສິນຄ້າສາມາດໃຊ້ລະບົບບາໂຄດໄດ້.




ຫຼັງຈາກບັນທຶກການຮັບສິນຄ້າເຂົ້າສາງແລ້ວ ລະບົບຈະຕິດຕາມລາຍການຮັບເຂົ້າເປັນລາຍການຕິດໜີ້ຜູ້ສະໜອງໂດຍອັດຕະໂນມັດ ສ່ວນການຊຳລະໜີ້ຜູ້ສະໜອງແມ່ນຈະແນະນຳໃນຂັ້ນຕອນຕໍ່ໄປ. ຖ້າຫາກການຊື້ສິນຄ້າໄດ້ຊຳລະໜີ້ແລ້ວ ຜູ້ໃຊ້ກໍ່ສາມາດຊຳລະບິນຮັບເຂົ້າສາງໄດ້ເລີຍ ເພື່ອບໍ່ໄດ້ລະບົບຄ້າງໜີ້ຜູ້ສະໜອງ.



## ການເບິ່ງລາຍງານ




ບັນຊີຮັບເຄື່ອງເຂົ້າສາງ

ປະຈຳເດືອນ 05/2015

ບໍລິສັດ APIS ຈຳກັດ

| ລ/ດ | ລະຫັດສິນຄ້າ | ຊື່ສິນຄ້າ | ຫົວໜ່ວຍ | ລາຄາຊື້ | ຈຳນວນ | ມູນຄ່າຕົ້ນທຶນ |
|---|---|---|---|---|---|---|
| **1** | **01** | **ບໍລິສັດ ເຄມີ** | | | 48 | 288,000 |
| 1 | 003.0001 | ນ້ຳປາ ກາປາພຶກ | ແກ້ວ | 8,500 | 12 | 102,000 |
| 2 | 003.0002 | ສະອິວ | ແກ້ວ | 7,500 | 12 | 90,000 |
| 3 | 004.0001 | ນ້ຳດື່ມຫົວເສືອຕຸກໃຫຍ່ | ຕຸກ | 4,000 | 24 | 96,000 |
| **2** | **02** | **ບໍລິສັດ ມອນຊັນ** | | | 224 | 256,000 |
| 4 | 002.0002 | ເຂົ້າໜົມ ອົມ | ກ້ອນ | 800 | 200 | 160,000 |
| 5 | 004.0001 | ນ້ຳດື່ມຫົວເສືອຕຸກໃຫຍ່ | ຕຸກ | 4,000 | 24 | 96,000 |
| | | **ລວມຍອດ:** | | | **272** | **544,000** |

ຫົວໜ້າພະແນກ　　ພະແນກການເງິນ　　ຫົວໜ້າສາງ　　ຜູ້ສະຫຼຸບ

## 11. ການຊຳລະໜີ້ຜູ້ສະໜອງ ແລະ ການລາຍງານ:



### ການເບິ່ງລາຍງານ




## 12. ຂາຍສິນຄ້າ ແລະ ການລາຍງານ:

ການຂາຍສິນຄ້າຜູ້ໃຊ້ສາມາດໃຊ້ລະບົບບາໂຄດໄດ້ ແລະ ຕ້ອງເລືອກລາຄາທີ່ຕ້ອງການຂາຍກ່ອນ.






ຫຼັງຈາກບັນທຶກລາຍການຂາຍແລ້ວຜູ້ໃຊ້ສາມາດທີ່ຈະພິມໃບແຈ້ງໜີ້ ໃນກໍລະນີຜູ້ຊື້ຕິດໜີ້ ຫຼື ຊຳລະບິນໃນເວລາຜູ້ຊື້ຈ່າຍຄ່າສິນຄ້າ



*ການເບິ່ງລາຍງານ ແມ່ນມີຫຼາຍແບບລາຍງານເພື່ອການກວດສອບຂໍ້ມູນການຂາຍຂອງຜູ້ໃຊ້ດັ່ງຕົວຢ່າງ:*




**ລາຍງານການຂາຍສິນຄ້າປະຈຳວັນ**

ປະຈຳເດືອນ 05/2015

ບໍລິສັດ APIS ຈຳກັດ

| ລ/ດ | ລະຫັດສິນຄ້າ | ຊື່ສິນຄ້າ | ລູກຄ້າ | ບິນເລກທີ | ວັນທີ | ຈຳນວນ | ຫົວໜ່ວຍ | ລາຄາ/ໜ່ວຍ | ມູນຄ່າລວມ | ສ່ວນຫຼຸດ | ແຖມ | ມູນຄ່າຍັງເຫຼືອ |
|---|---|---|---|---|---|---|---|---|---|---|---|---|
| **001** | **ໝວດ ເຄື່ອງດື່ມ** | | | | | | | | 720,000 | | | 720,000 |
| 1 | 001.0001 | ເປບຊີ | ລູກຄ້າທົ່ວໄປ | 1500001 | 26/05/2015 | 1 | ຕຸກ | 10,000 | 10,000 | | | 10,000 |
| 2 | 001.0001 | ເປບຊີ | ລູກຄ້າທົ່ວໄປ | 1500003 | 31/05/2015 | 30 | ຕຸກ | 10,000 | 300,000 | | | 300,000 |
| 3 | 001.0001 | ເປບຊີ | ລູກຄ້າທົ່ວໄປ | 1500003 | 31/05/2015 | 1 | ຕຸກ | | | | ✓ | |
| 4 | 001.0001 | ເປບຊີ | ລູກຄ້າທົ່ວໄປ | 1500002 | 26/05/2015 | 1 | ຕຸກ | 10,000 | 10,000 | | | 10,000 |
| 5 | 001.0001 | ເປບຊີ | ອ້ານ ສຸກໃຈ | 1500004 | 31/05/2015 | 20 | ຕຸກ | 10,000 | 200,000 | | | 200,000 |
| 6 | 001.0007 | ເບຍ | ອ້ານ ສຸກໃຈ | 1500004 | 31/05/2015 | 20 | ແກ້ວ | 10,000 | 200,000 | | | 200,000 |
| **004** | **ນ້ຳດື່ມ** | | | | | | | | 25,000 | | | 25,000 |
| 7 | 004.0001 | ນ້ຳດື່ມຫົວເສືອຕຸກໃໝ່ | ລູກຄ້າທົ່ວໄປ | 1500003 | 31/05/2015 | 5 | ຕຸກ | 5,000 | 25,000 | | | 25,000 |
| | | **ລວມຍອດ:** | | | | | | | 745,000 | | | 745,000 |




ສ່ວນລາຍງານຕາມປະເພດສິນຄ້າຜູ້ໃຊ້ສາມາດກວດສອບການເຄື່ອນໄຫວການຂາຍຕາມພະນັກງານ ຫຼື ຕາມລາຍຊື່ລູກຄ້າໄດ້.



## 13. ການຊຳລະໜີ້ຂອງລູກຄ້າ ແລະ ການລາຍງານ:

ຫຼັງຈາກທີ່ໄດ້ບັນທຶກລາຍການຂາຍແລ້ວຖ້າຫາກມີລູກຄ້າຕິດໜີ້ຜູ້ໃຊ້ກໍ່ສາມາດ ຕິດຕາມໜີ້ ແລະ ການຊຳລະໜີ້ຂອງລູກຄ້າດັ່ງວິທີລຸ່ມນີ້:










### ການເບິ່ງລາຍງານ




ໃນການເບິ່ງລາຍງານສັງລວມໜີ້ຕ້ອງຮັບຈາກລູກຄ້າແມ່ນສາມາດກຳນົດໄດ້ວ່າຈະເບິ່ງໜີ້ລູກຄ້າຜູ້ໃດ, ວັນເດືອນໃດ ແລະ ສາມາດກວດເບິ່ງລາຍລະອຽດຕາມບິນທີ່ລູກຄ້າຕິດໜີ້ໄດ້.





ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
---===000===---

ເລກທີ:
ວັນທີ:

ລາຍງານສັງລວມໜີ້ຕ້ອງຮັບຈາກການຂາຍສິນຄ້າ

ປະຈຳປີ 2015

ບໍລິສັດ APIS ຈຳກັດ

| ລ/ດ | ລູກຄ້າ | ຍອດຍົກມາ | ໜີ້ເກີດຂຶ້ນ | ຊຳລະໜີ້ | ເຫຼືອທ້າຍ | ໝາຍເຫດ |
|---|---|---|---|---|---|---|
| 1 | ລູກຄ້າທົ່ວໄປ | | 335,000 | 325,000 | 10,000 | |
| 2 | ຮ້ານ ສຸກໃຈ | | 400,000 | 300,000 | 100,000 | |
| | ລວມ | | 735,000 | 625,000 | 110,000 | |

ວຽງຈັນ ວັນທີ:

ພະແນກການເງິນ

ຜູ້ອະນຸບ

## 14. ການຈ່າຍສິນຄ້າ ແລະ ການລາຍງານ:

ເປັນການຈ່າຍສິນຄ້າ ເພື່ອຊົມໃຊ້ພາຍໃນ ຫຼື ດັດແກ້ຈຳນວນສາງເພື່ອໃຫ້ກົງກັບຈຳນວນສິນຄ້າຕົວຈິງດ້ວຍເຫດຜົນອື່ນໆ ເຊິ່ງເປັນການຈ່າຍເພື່ອຕັດຕົ້ນທຶນ ແລະ ຈຳນວນສາງ ທີ່ບໍ່ໄດ້ກ່ຽວຂ້ອງກັບລາຍຮັບ.





# ຈ່າຍສິນຄ້າໃຫ້ພະແນກ
## Stock to Section

No : 00002
Date : 06/01/2015
Section : ເຄື່ອງເສຍ

**ບໍລິສັດ APIS ຈຳກັດ**

Tel: 020 22333383
Fax : 021 617010

| ລ/ດ No | ລະຫັດສິນຄ້າ Code | ເນື້ອໃນລາຍການ(ລາວ) Discription(Lao) | ຫົວໜ່ວຍ Unit | ຕົ້ນທຶນ Cost | ຈຳນວນ Quantity | ເປັນເງິນ Amount |
|---|---|---|---|---|---|---|
| 1 | 001.0001 | ເປບຊີ | ຕຸກ | 5,000.00 | 1.00 | 5,000.00 |
| 2 | 001.0007 | ເບຍ | ແກ້ວ | 5,000.00 | 1.00 | 5,000.00 |
| Remark: | | | ລວມ | | | 10,000.00 |

ຜູ້ຈ່າຍ Payment

ຜູ້ຮັບ Receipt

*ການເບິ່ງລາຍງານ*



**ລາຍງານການຈ່າຍສິນຄ້າ**

ປະຈໍາປີ 2015

ບໍລິສັດ APIS ຈໍາກັດ

| ລ/ດ | ລະຫັດສິນຄ້າ | ຊື່ສິນຄ້າ | ຫົວໜ່ວຍ | ລາຄາຊື້ | ຈໍານວນ | ມູນຄ່າຕົ້ນທຶນ |
|---|---|---|---|---|---|---|
| **05** | **ເຄື່ອງເສຍ** | | | | 3 | 20,000 |
| **1** | **001** | **ໝວດ ເຄື່ອງດື່ມ** | | | 2 | 10,000 |
| 1 | 001.0001 | ເປບຊີ | ຕຸກ | | 1 | 5,000 |
| 2 | 001.0007 | ເບຍ | ແກ້ວ | | 1 | 5,000 |
| **2** | **002** | **ເຂົ້າໜົມ** | | | 1 | 10,000 |
| 3 | 002.0001 | ເຂົ້າໜົມ ອົບ | ຖົງ | | 1 | 10,000 |
| | | **ລວມຍອດ:** | | | **3** | **20,000** |

ຫົວໜ້າພະແນກ ພະແນກການເງິນ ຫົວໜ້າສາງ ຜູ້ສະຫຼຸບ

## 15. ການຮັບສິນຄ້າຄືນຈາກການຈ່າຍ:

ເປັນການຮັບລາຍການເຄື່ອງຄືນຈາກການຈ່າຍຕັດສາງອອກໄປຄືນ ຕົວຢ່າງ: ເມື່ອພະນັກງານໄປກວດເຄື່ອງພົບວ່າເຄື່ອງເສຍແລ້ວມາລົງບັນຊີຈ່າຍເຄື່ອງອອກເພື່ອຕັດສາງ ແຕ່ວັນທັດມາ ພະນັກງານສາມາດກວດເຫັນເຄື່ອງທີ່ລົງບັນຊີຈ່າຍນັ້ນວ່າບໍ່ໄດ້ເສຍໄປໃສພຽງແຕ່ຖືກຍ້າຍບ່ອນເລີຍບໍ່ສາມາດກວດເຫັນ ດັ່ງນັ້ນຜູ້ໃຊ້ຕ້ອງໄດ້ມາລົງບັນຊີຮັບເຄື່ອງຄືນຈາກການຈ່າຍ ເຊິ່ງມີວິທີດັ່ງນີ້:



## ຮັບສິນຄ້າຈາກພະແນກ
Refund from section

NO : ST00001 Date: 06/01/2015
Section ID: 05
Section name: ເຄື່ອງເສຍ

**ບໍລິສັດ APIS ຈຳກັດ**
Tel: 020 22333383
Fax: 021 617010

| ລ/ດ NO | ລະຫັດສິນຄ້າ Code | ຊື່ສິນຄ້າ(ລາວ) Discription(Lao) | ຊື່ສິນຄ້າ(ອັງກິດ) Discription(Eng) | ຫົວໜ່ວຍ Unit | ລາຄາຕົ້ນທຶນ Cost | ຈຳນວນ Quatity | ເປັນເງິນ Amount |
|---|---|---|---|---|---|---|---|
| 1 | 001.0001-2 | ເບຍຊີ | | ຕຸກ | 5,000.00 | 1.00 | 5,000.00 |
| | | | | | Total: | | 5,000.00 |

ຜູ້ສົ່ງ Donor ຜູ້ຮັບ Receive

## 16. ການສົ່ງສິນຄ້າຄືນຜູ້ສະໜອງ ແລະ ລາຍງານ:

ກໍລະນີນີ້ແມ່ນໃຊ້ໃນເວລາຮັບເຄື່ອງເຂົ້າສາງຈາກການຈັດຊື້ແລ້ວ ແຕ່ຫຼັງຈາກມາກວດນັບຕົວຈິງພັດມີລາຍການເຄື່ອງທີ່ບໍ່ຖືກກັບລາຍການສັ່ງຊື້ ຫຼື ເຄື່ອງຢູ່ໃນສະພາບທີ່ບໍ່ສົມບູນ ດັ່ງນັ້ນຈຶ່ງມີການຈັດລາຍການເຄື່ອງດັ່ງກ່າວເພື່ອສົ່ງຄືນຜູ້ສະໜອງ ເຊິ່ງຜູ້ໃຊ້ຕ້ອງໄດ້ບັນທຶກລາຍການເຄື່ອນໄຫວທີ່ເກີດຂຶ້ນ ແຕ່ຖ້າຫາກມີການກວດສອບກ່ອນທີ່ຈະລົງບັນຊີຮັບເຄື່ອງຈາກການຈັດຊື້ເຂົ້າສາງ ແລະ ໄດ້ບັນທຶກລາຍການທີ່ຖືກຕ້ອງເຂົ້າໃນລະບົບ ຜູ້ໃຊ້ກໍ່ອາດຈະບໍ່ໄດ້ໃຊ້ເມນູນີ້ເລີຍ.





## ລາຍການສົ່ງສິນຄືນຜູ້ສະໜອງ
Stock to supplier

Supplier ID :01 Supplier name : ບໍລິສັດ ເຄພີ

No: 00003
Date: 06/01/2015

Tel: 020 22333383
Fax: 021 617010

| ລ/ດ No | ລະຫັດ Code | ເນື້ອໃນລາຍການ(ລາວ) Discription(Lao) | ເນື້ອໃນລາຍການ(ອັງກິດ) Discription(Eng) | ຫົວໜ່ວຍ Unit | ຕົ້ນທຶນ Cost | ຈຳນວນ Quantity | ເປັນເງິນ Amount |
|---|---|---|---|---|---|---|---|
| 1 | 003.0001-31-05-20 | ນ້ຳປາ ກາປາໝຶກ | | ແກ້ວ | 8,500.00 | 2.00 | 17,000.00 |
| | | | Total= | | | | |

ຜູ້ສົ່ງ Donor — ຜູ້ຮັບ Receipt

### *ການເບິ່ງລາຍງານ:*









## Payment of supplier
By supplier

**ບໍລິສັດ APIS ຈຳກັດ**

Tel: 020 22333383
Fax: 021 617010

No.........................

| ລ/ດ No | ລະຫັດ Code | ເນື້ອໃນລາວ Discription(Lao) | ເນື້ອໃນອັງກິດ Discription(Eng) | ຫົວໜ່ວຍ Unit | ຕົ້ນທຶນ Cost | ຈຳນວນ Quantity | ເປັນເງິນ Amount |
|---|---|---|---|---|---|---|---|
| 1 | 01 | ບໍລິສັດ ເຄພີ | | | 8,500.00 | 2.00 | 17,000.00 |
| 1 | 003.0001 | ນ້ຳປາ ກາປາໝຶກ | | ແກ້ວ | 8,500.00 | 2.00 | 17,000.00 |
| | | | Total | | 8,500.00 | 2.00 | 17,000.00 |

Reporter

## 17. ການຮັບສິນຄ້າຄືນຈາກລູກຄ້າສົ່ງຄືນ ແລະ ການລາຍງານ:

ເປັນກໍລະນີທີ່ສິນຄ້າທີ່ຂາຍອອກໄປແລ້ວ ລູກຄ້າໄດ້ນໍາມາສົ່ງຄືນ ເຊິ່ງຜູ້ໃຊ້ສາມາດບັນທຶກລາຍການເຄື່ອນໄຫວດັ່ງກ່າວ ຫຼື ຈະໃຊ້ວິທີແກ້ໄຂບິນຂາຍແລ້ວສັ່ງພິມບິນອອກໃຫມ່ກໍ່ໄດ້ ແຕ່ລະບົບຈະບໍ່ໄດ້ຕິດຕາມລາຍການສົ່ງເຄື່ອງຄືນຖ້າຫາກໃຊ້ວິທີແກ້ໄຂບິນ.




### ການເບິ່ງລາຍງານ



## 18. ລະບົບການລາຍງານສັງລວມ:

❖ ການລາຍງານສັງລວມສາງ: ເປັນການລາຍງານການເຄື່ອນໄຫວທັງໝົດຂອງສາງສິນຄ້າ.




ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
======000======

APIS Resources

**ບໍລິສັດ APIS ຈຳກັດ**
ຖະໜົນ ທ່າເດື່ອ
ບ້ານ ສາລາຄຳ,ເມືອງ ຫາດຊາຍຟອງ,ແຂວງ ນະຄອນຫລວງ
020 22333383,021 617010

**ລາຍງານສັງລວມສາງສິນຄ້າ**

ປະຈຳເດືອນ 05/2015

ເລກທີ :....................

| ລ/ດ | ລະຫັດ | ຊື່ສິນຄ້າ | ຫົວໜ່ວຍ | ຍອດຍົກມາ | | ຮັບເຂົ້າ | | | ຈ່າຍອອກ | | | ຍອດເຫຼືອທ້າຍ | |
|---|---|---|---|---|---|---|---|---|---|---|---|---|---|
| | | | | ຈຳນວນ | ມູນຄ່າ | ຈຳນວນ | ລາຄາ | ມູນຄ່າ | ຈຳນວນ | ລາຄາ | ມູນຄ່າ | ຈຳນວນ | ມູນຄ່າ |
| **001** | | **ໝວດ ເຄື່ອງດື່ມ** | | | | | | | | | | | |
| 1 | 001.0001 | ເປບຊີ່ | ຕຸກ | 98 | 490,000.00 | | | | 72 | | 360,000.00 | 26 | 130,000.00 |
| 2 | 001.0007 | ເບຍ | ແກ້ວ | 100 | 500,000.00 | | | | 20 | | 100,000.00 | 80 | 400,000.00 |
| | | **ລວມ** | | | **990,000.00** | | | | | | **460,000.00** | | **530,000.00** |
| **002** | | **ເຂົ້າໜົມ** | | | | | | | | | | | |
| 3 | 002.0001 | ເຂົ້າໜົມ ອົມ | ຖົງ | 99 | 990,000.00 | | | | 1 | | 10,000.00 | 98 | 980,000.00 |
| 4 | 002.0002 | ເຂົ້າໜົມ ອົມ | ກ້ອນ | | | 200 | 800.00 | 160,000.00 | | 800.00 | 0.00 | 200 | 160,000.00 |
| | | **ລວມ** | | | **990,000.00** | | | **160,000.00** | | | **10,000.00** | | **1,140,000.00** |
| **003** | | **ເຄື່ອງປຸງແຕ່ງອາຫານ** | | | | | | | | | | | |
| 5 | 003.0001 | ນ້ຳປາ ກາປາໝຶກ | ແກ້ວ | | | 12 | 8,500.00 | 102,000.00 | | 8,500.00 | 0.00 | 12 | 102,000.00 |
| 6 | 003.0002 | ສະອິ້ວ | ແກ້ວ | | | 12 | 7,500.00 | 90,000.00 | | 7,500.00 | 0.00 | 12 | 90,000.00 |
| | | **ລວມ** | | | | | | **192,000.00** | | | **0.00** | | **192,000.00** |
| **004** | | **ນ້ຳດື່ມ** | | | | | | | | | | | |
| 7 | 004.0001 | ນ້ຳດື່ມຫົວເສືອດາວໃໝ່ | ຕຸກ | | | 48 | 4,000.00 | 192,000.00 | 5 | 4,000.00 | 20,000.00 | 43 | 172,000.00 |
| | | **ລວມ** | | | | | | **192,000.00** | | | **20,000.00** | | **172,000.00** |
| | | **ລວມຍອດ** | | | **1,980,000.00** | | | **544,000.00** | | | **490,000.00** | | **2,034,000.00** |

ຫົວໜ້າພະແນກ ພະແນກການເງິນ ຫົວໜ້າສາງ ຜູ້ສະຫຼຸບ

## ❖ ການລາຍງານສັງລວມການຈ່າຍ:

ເປັນການກວດສອບຄືນວ່າລວມການຈ່າຍສິນຄ້າ ລວມມີລາຍລະອຽດໃດແດ່?






ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
---===000===---

ບໍລິສັດ APIS ຈຳກັດ
ບ້ານ ສາລາຄຳ,ເມືອງ ຫາດຊາຍຟອງ,ແຂວງ ນະຄອນຫລວງ
020 22333383,021 617010

**ລາຍງານການຈ່າຍສິນຄ້າ**
ປະຈຳເດືອນ 05/2015

| ລ/ດ | ລະຫັດ | ລາຍການ | ຫົວໜ່ວຍ | ລາຍການຈ່າຍ | | | | | | | | | ລວມ | |
|---|---|---|---|---|---|---|---|---|---|---|---|---|---|---|
| | | | | ຈ່າຍໃຫ້ພະແນກ | | | ສົ່ງສິນຄ້າຄືນຜູ້ສະໜອງ | | | ຂາຍສິນຄ້າ | | | | |
| | | | | ຈຳນວນ | ລາຄາ | ມູນຄ່າ | ຈຳນວນ | ລາຄາ | ມູນຄ່າ | ຈຳນວນ | ລາຄາ | ມູນຄ່າ | ຈຳນວນ | ມູນຄ່າ |
| **001** | **ໝວດ ເຄື່ອງດື່ມ** | | | | | | | | | | | | **94.00** | **180,000.00** |
| 1 | 001.0001 | ເປບຊີ | ຕຸກ | 1 | 5,000 | 5,000 | 20 | 12,000 | 120,000 | 52 | 30,000 | 40,000 | 73.00 | 165,000.00 |
| 8 | 001.0007 | ເບຍ | ແກ້ວ | 1 | 5,000 | 5,000 | | | | 20 | 10,000 | 10,000 | 21.00 | 15,000.00 |
| **002** | **ເຂົ້າໜົມ** | | | | | | | | | | | | **1.00** | **10,000.00** |
| 1 | 002.0001 | ເຂົ້າໜົມ ອີມ | ຖົງ | 1 | 10,000 | 10,000 | | | | | | | 1.00 | 10,000.00 |
| **003** | **ເຄື່ອງປຸງແຕ່ງອາຫານ** | | | | | | | | | | | | **2.00** | **17,000.00** |
| 1 | 003.0001 | ນ້ຳປາ ກາປາໝຶກ | ແກ້ວ | | | | 2 | 8,500 | 17,000 | | | | 2.00 | 17,000.00 |
| **004** | **ນ້ຳດື່ມ** | | | | | | | | | | | | **5.00** | **5,000.00** |
| 1 | 004.0001 | ນ້ຳດື່ມຫົວເສືອຕຸກໃຫມ່ | ຕຸກ | | | | | | | 5 | 5,000 | 5,000 | 5.00 | 5,000.00 |
| | | **ລວມ** | | | | | | | | | | | | **212,000.00** |

ວຽງຈັນ ວັນທີ:..............................

ຫົວໜ້າພະແນກ    ພະແນກການເງິນ    ຫົວໜ້າສາງ    ຜູ້ສະຫຼຸບ

## 19. ການສັ່ງພິມ ແລະ ການສຳຮອງເອກະສານ Export Report:

ເມື່ອເວລາເຮົາ Preview ແຕ່ລະໃບລາຍງານແມ່ນຈະມີວິທີສັ່ງພິມ ແລະ ສຳຮອງແບບດຽວກັນເຊິ່ງມີວິທີດັ່ງນີ້:

- ການສັ່ງພິມ:




- ການສຳຮອງເອກະສານ:



## 20. ການສຳຮອງຂໍ້ມູນ:




## 21. ການປິດບັນຊີປະຈຳເດືອນ

ແມ່ນຈະໄດ້ປິດໃນທຸກໆ ທ້າຍເດືອນ ເພື່ອສະຫຼຸບບັນຊີສາງປະຈຳເດືອນ ແລະ ລະບົບຈະຍົກຍອດໃນເດືອນຕໍ່ໄປໃຫ້ໂດຍອັດຕະໂນມັດ.

